ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ 249 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 04 ຕຸລາ 2023

# ໜັງສືແຈ້ງການ

**ເຖິງ:** ພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານລັດຖະກອນ, ທະຫານ, ຕຳຫຼວດ, ຕະຫຼອດຮອດຜູ້ທີ່ຢູ່ອາໄສຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ໃຫ້ມີສະຕິລະວັງຕົວ ຕໍ່ການເຄື່ອນໄຫວຂອງບຸກຄົນ ທີ່ເຄື່ອນໄຫວໂຄສະນາລະດົມເງິນຝາກ ຜ່ານທາງສື່ສັງຄົມອອນລາຍ ໂດຍບໍ່ໄດ້ຮັບການອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ.

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018;
- ອີງຕາມຂໍ້ມູນທາງສື່ອອນລາຍ (Facebook).

ຫ້ອງການ ທະນາຄານແຫ່ງ ສປປ ລາວ (ທຫລ) ຂໍແຈ້ງມາຍັງທ່ານຊາບວ່າ ໃນປັດຈຸບັນໄດ້ມີບຸກຄົນ ເຄື່ອນໄຫວລະດົມເງິນຝາກຜ່ານທາງສື່ສັງຄົມອອນລາຍ (Facebook) ໂດຍບໍ່ໄດ້ຮັບການອະນຸຍາດຈາກ ທຫລ ຊຶ່ງມີການກ່າວອ້າງ ແລະ ໂຄສະນາໃຫ້ອັດຕາຜົນຕອບແທນດອກເບ້ຍທີ່ສູງກວ່າເກນປົກກະຕິ ເມື່ອສົມທຽບກັບທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນໆ ຊຶ່ງການເຄື່ອນໄຫວດັ່ງກ່າວ ອາດນຳໄປສູ່ການສ້າງຄວາມເສຍຫາຍຕໍ່ຊັບສິນຂອງປະຊາຊົນໃນສັງຄົມ ດັ່ງເຫດການທີ່ເຄີຍເກີດຂຶ້ນມາແລ້ວໃນໄລຍະຜ່ານມາ.

ສະນັ້ນ, ຫ້ອງການ ທຫລ ຂໍຖືເປັນກຽດແຈ້ງມາຍັງ ພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານລັດຖະກອນ, ທະຫານ, ຕຳຫຼວດ, ຕະຫຼອດຮອດຜູ້ທີ່ຢູ່ອາໄສຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ ຈົ່ງເພີ່ມທະວີຄວາມມີສະຕິລະວັງຕົວ ແລະ ຮອບຄອບ ກ່ອນການຕັດສິນໃຈລົງທຶນ ຫຼື ຝາກເງິນ ຕາມການເຄື່ອນໄຫວໂຄສະນາໃນລັກສະນະດັ່ງກ່າວ ເພື່ອຫຼີກລ້ຽງຄວາມສ່ຽງຕໍ່ຊັບສິນ ແລະ ທຶນຮອນຂອງພໍ່ແມ່ປະຊາຊົນ.

ເຊັນແທນຫົວໜ້າຫ້ອງການ
ຮອງຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ສຸກັນ ຈັນທະວົງ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la